# ສະຫຼຸບນະໂຍບາຍການຊ່ວຍເຫຼືອທາງການເງິນສຳລັບຄ່າປິ່ນປົວ

ໂຄງການຊ່ວຍເຫຼືອທາງການເງິນສຳລັບການປິ່ນປົວ (Medical Financial Assistance, MFA) ຂອງ Kaiser Permanente ໃຫ້ການຊ່ວຍເຫຼືອທາງການເງິນສຳລັບຄົນເຈັບທີ່ມີເງື່ອນໄຂໄດ້ຮັບ ຊຶ່ງເປັນຜູ້ທີ່ຕ້ອງການຄວາມຊ່ວຍເຫຼືອໃນການຊ່ວຍຈ່າຍສຳລັບການເບິ່ງແຍງຮັກສາທີ່ສຸກເສີນ ຫຼື ຈຳເປັນທີ່ເຂົາເຈົ້າໄດ້ຮັບໃນສະຖານພະຍາບານຂອງ Kaiser Permanente ຫຼືໂດຍຜູ້ໃຫ້ບໍລິການຂອງ Kaiser Permanente. ບັນດາຄົນເຈັບສາມາດສະໝັກຂໍເຂົ້າໂຄງການ MFA ໄດ້ຫຼາຍທາງ ລວມເຖິງ ການໄປສະໝັກດ້ວຍຕົນເອງ, ສະໝັກທາງໂທຣະສັບ, ຫຼື ໂດຍການຍື່ນສົ່ງໃບສະໝັກທີ່ເປັນເຈ້ຍ. ຄົນເຈັບຕ້ອງມີເງື່ອນໄຂກົງຕາມຂໍ້ກຳນົດຂ້າງລຸ່ມນີ້ເພື່ອໃຫ້ມີສິດໄດ້ຮັບການຊ່ວຍເຫຼືອ.

**ໃຜມີສິດໄດ້ຮັບການຊ່ວຍເຫຼືອທາງການເງິນ ແລະມີຂໍ້ກຳນົດຫຍັງແດ່?**

ທາງໂຄງການຊ່ວຍເຫຼືອຜູ້ມີລາຍໄດ້ຕ່ຳ, ບໍ່ມີປະກັນໄພ, ຫຼື ຄົນເຈັບທີ່ຂາດໂອກາດຊຶ່ງຕ້ອງການຄວາມຊ່ວຍເຫຼືອໃນການຊ່ວຍຈ່າຍຄ່າປິ່ນປົວໃນບາງສ່ວນ ຫຼື ທັງໝົດ. ໂດຍທົ່ວໄປແລ້ວ, ບັນດາຄົນເຈັບມີສິດໄດ້ຮັບການຊ່ວຍເຫຼືອທາງການເງິນເມື່ອລາຍໄດ້ລວມຂອງຄົວເຮືອນຢູ່ທີ່ລະດັບ ຫຼື ຕ່ຳກວ່າ 300% ຂອງລະດັບຄວາມທຸກຍາກທີ່ຣັຖບານກາງກຳນົດໄວ້ (Federal Poverty Guidelines, FPG) ຫຼືມີຄ່າໃຊ້ຈ່າຍດ້ານການປິ່ນປົວທີ່ສູງເກີນປົກກະຕິ. ຄົນເຈັບຄວນປຶກສາກັບເຈົ້າໜ້າທີ່ທີ່ຫ້ອງການທຸລະກິດໃນສະຖານພະຍາບານຂອງ Kaiser Permanente ຫຼືທີ່ໂຕະລົງທະບຽນເພື່ອພິຈາລະນາຕັດສິນການມີສິດໄດ້ຮັບ ແລະ ສຳລັບການຊ່ວຍເຫຼືອໃນການ ສະໝັກ.

*ບັນດາຄົນເຈັບທີ່ມີສິດໄດ້ຮັບການຊ່ວຍເຫຼືອທາງການເງິນສຳລັບຄ່າປິ່ນປົວນັ້ນຈະບໍ່ຖືກເກັບຄ່າເກີນຈຳນວນທີ່ເກັບທົ່ວໄປ (amounts generally billed, AGB) ສຳລັບຄ່າປິ່ນປົວສຸກເສີນ ຫຼືຄ່າເບິ່ງແຍງທີ່ຈຳເປັນທາງການແພດອື່ນໆ. ເບິ່ງທີ່ເວັບໄຊ* kp.org/mfa/wa *ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບ AGB.*

**Kaiser Permanente ກວດກັ່ນຕອງບັນດາຄົນເຈັບເພື່ອເບິ່ງການມີສິດໄດ້ຮັບສຳລັບໂຄງການຊ່ວຍເຫຼືອຂອງຣັຖ ແລະເອກະຊົນ ບໍ່?**

Kaiser Permanente ໃຫ້ການຊ່ວຍເຫຼືອແກ່ຄົນເຈັບໃນການກຳນົດຫາໂຄງການປະກັນໄພຄຸ້ມຄອງສຸຂະພາບທັງຂອງຣັຖ ແລະເອກະຊົນ ທີ່ອາດຊ່ວຍໃນການເຂົ້າເຖິງການເບິ່ງແຍງສຸຂະພາບ. ຄົນເຈັບທີ່ຄິດວ່າມີສິດທີ່ຈະໄດ້ຮັບປະກັນໄພຄຸ້ມຄອງສຸຂະພາບຂອງຣັຖ ຫຼື ເອກະຊົນແມ່ນຈຳເປັນຕ້ອງ ສະໝັກເຂົ້າໂຄງການເຫຼົ່ານັ້ນ.

**ໂຄງການນີ້ແມ່ນຄຸ້ມຄອງຫຍັງແດ່?**

ໂຄງການຊ່ວຍເຫຼືອທາງການເງິນສຳລັບຄ່າປິ່ນປົວຄຸ້ມຄອງຈ່າຍຄ່າເບິ່ງແຍງທີ່ຈຳເປັນທາງການແພດຊຶ່ງຈັດຫາໃຫ້ທີ່ຫ້ອງການແພດ, ໂຮງໝໍ, ຮ້ານຂາຍຢາຂອງ Kaiser Permanente ຫຼືຈັດຫາໃຫ້ໂດຍຜູ້ໃຫ້ບໍລິການຂອງ Kaiser Permanente. ປະເພດຂອງການບໍລິການທີ່ບໍ່ຢູ່ໃນພາຍໃຕ້ການຄຸ້ມຄອງໄດ້ແກ່ບັນດາບໍລິການທີ່ຜູ້ໃຫ້ບໍລິການຂອງ Kaiser Permanente ບໍ່ຖືວ່າເປັນເຫດສຸກເສີນ ຫຼື ບໍ່ ຈຳເປັນທາງການແພດ, ການເຮັດພັນ ແລະການບໍລິການຖືພາແທນ ແລະຄ່າງວດປະກັນໄພສຸຂະພາບ. ກະຣຸນາເບິ່ງລາຍການທີ່ຄົບຖ້ວນກວ່ານີ້ໃນນະໂຍບາຍ MFA.

**ມີບໍລິການຊ່ວຍເຫຼືອດ້ານພາສາບໍ່?**

ມີນາຍພາສາໃຫ້ບໍລິການໂດຍບໍ່ເສັຽຄ່າ. ຖ້າວ່າ ທ່ານຈຳເປັນຕ້ອງເວົ້າກັບໃຜ ຜູ້ໜຶ່ງໂດຍຕ້ອງມີການຊ່ວຍເຫຼືອຈາກນາຍພາສາ, ກະຣຸນາໂທຣໄປທີ່ ພະແນກ ບໍລິການສະມາຊິກທີ່ເບີໂທຣ 1-888-901-4636 ຫຼື ເບິ່ງທີ່ເວັບໄຊຂອງ ພວກເຮົາທີ່ kp.org/mfa/wa.

**Kaiser Permanente ມີນະໂຍບາຍການຊ່ວຍເຫຼືອທາງການເງິນບໍ່?**

ທ່ານສາມາດຮ້ອງຂໍສຳເນົາໄດ້ໂດຍບໍ່ເສັຽຄ່າກ່ຽວກັບນະໂຍບາຍການຊ່ວຍເຫຼືອທາງການເງິນສຳລັບຄ່າປິ່ນປົວຂອງ Kaiser Permanente ໂດຍໂທຣ 800-992-2279, ສົ່ງອີເມວທີ່ kpwa.resource-L@kp.org, ຫຼື ເບິ່ງທີ່ ເວັບໄຊຂອງພວກເຮົາທີ່ kp.org/mfa/wa.

**ຕ້ອງການຄວາມຊ່ວຍເຫຼືອບໍ່?**

ສຳລັບຄວາມຊ່ວຍເຫຼືອ ຫຼື ຄຳຖາມກ່ຽວກັບຂັ້ນຕອນການສະໝັກຂໍການຊ່ວຍເຫຼືອທາງການເງິນສຳລັບຄ່າປິ່ນປົວ, ກະຣຸນາໂທຣ 800-442-4014, ເລືອກ 4, ເລືອກ 7, ຫຼື ປຶກສາກັບເຈົ້າໜ້າທີ່ທີ່ຫ້ອງການທຸລະກິດ ຫຼື ໂຕະລົງທະບຽນໃນສະຖານພະຍາບານໃດໆ ຂອງ Kaiser Permanente.

**ຂ້າພະເຈົ້າສະໝັກໄດ້ແນວໃດ?**

ທ່ານສາມາດສະໝັກຂໍການຊ່ວຍເຫຼືອທາງການເງິນສຳລັບຄ່າປິ່ນປົວໄດ້ໃນຫຼາຍທາງ -- ທັງໂດຍການຕິດຕໍ່ກັບພະແນກບໍລິການສະມາຊິກທີ່ເບີໂທຣ 888-901-4636 ເພື່ອຂໍຂໍ້ມູນໂຄງການດ້ວຍຕົນເອງ ຫຼື ໂດຍທາງໂທຣະສັບ ຫຼື ໂດຍຂໍໃບສະໝັກທີ່ເປັນເຈ້ຍ ຈາກແຫຼ່ງບໍລິການໃດໜຶ່ງຕໍ່ໄປນີ້:

- ເຈົ້າໜ້າທີ່ທີ່ຫ້ອງການທຸລະກິດ ຫຼື ໂຕະລົງທະບຽນໃນສະຖານ ພະຍາບານໃດໆ ຂອງ Kaiser Permanente.
- ໂທຣ 800-992-2279
- ໂດຍສົ່ງອີເມວ (ບໍ່ເສັຽຄ່າ) ທີ່ kpwa.resource-L@kp.org
- ດາວໂຫລດໃບສະໝັກຜ່ານເວັບໄຊຊຸມຊົນຂອງ Kaiser Permanente ທີ່ kp.org/mfa/wa

ກະຣຸນາສົ່ງຄືນໃບສະໝັກທີ່ປະກອບຄົບຖ້ວນແລ້ວ (ລວມເຖິງ ເອກະສານທີ່ຈຳເປັນທັງໝົດ ແລະຂໍ້ມູນທີ່ລະບຸໄວ້ໃນຄຳແນະນຳຂອງໃບສະໝັກ)

-- ດ້ວຍຕົນເອງທີ່ຫ້ອງການທຸລະກິດ ຫຼື ໂຕະລົງທະບຽນໃນສະຖານພະຍາບານໃດໆ ຂອງ Kaiser Permanente ບ່ອນທີ່ໃກ້ທີ່ສຸດ

-- ໂດຍທາງໄປສະນີເຖິງ: Kaiser Permanente, Medical Financial Assistance, P.O. Box 34584, Seattle, WA 98124-1584

-- ໂດຍທາງແຟກຊ໌ທີ່ເບີ 206-877-0640

Kaiser Permanente ຈະທວນຄືນໃບສະໝັກທີ່ສົ່ງມາເມື່ອໃບສະໝັກນັ້ນຄົບຖ້ວນສົມບູນ ແລະຈະພິຈາລະນາຕັດສິນວ່າທ່ານມີສິດໄດ້ຮັບຫຼືບໍ່ໂດຍສອດຄ່ອງກັບນະໂຍບາຍການຊ່ວຍເຫຼືອທາງການເງິນສຳລັບຄ່າປິ່ນປົວຂອງ Kaiser Permanente. ໃບສະໝັກທີ່ບໍ່ຄົບຖ້ວນອາດສົ່ງຜົນໃຫ້ເກີດຄວາມຫຼ້າຊ້າໃນການດຳເນີນການ ຫຼື ການປະຕິເສດ ໃບສະໝັກ MFA, ແຕ່ Kaiser Permanente ຈະແຈ້ງໃຫ້ຜູ້ສະໝັກຮູ້ ແລະໃຫ້ໂອກາດໃນການສົ່ງເອກະສານ ຫຼືຂໍ້ມູນທີ່ຂາດຫາຍໄປ, ພາຍໃນວັນທີທີ່ກຳນົດໄວ້.

©2015 Kaiser Foundation Hospitals;
Kaiser Foundation Health Plan of Washington